ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************************

ສານປະຊາຊົນແຂວງຫຼວງພະບາງ

ຄະນະສານແພ່ງ

ຂັ້ນຕົ້ນ

ເລກທີ 012/ຂຕ.ພ

ລົງວັນທີ 14 ພະຈິກ 2016

# ຄໍາຕັດສິນ

## ຄະນະສານແພ່ງ ຂອງສານປະຊາຊົນແຂວງຫຼວງພະບາງ ປະກອບດ້ວຍ:

ທ່ານ ແສງດາວເພັດ ເວດມະນີ ປະທານ

ທ່ານ ໄຊຍະເລີດ ບັນດາວົງ ຄະນະ

ທ່ານ ບຸນທະວີ ສີລັດຕະນະ ຄະນະ

ນັ່ງພ້ອມດ້ວຍ ທ່ານ ສອນເພັດ ພັນທະສິນ ຈ່າສານ

ໂດຍຊ້ອງໜ້າ ທ່ານ ບຸນມີ ທຳມະວົງຈິດ ພະນັກງານໄອຍະການ ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນແຂວງຫຼວງພະບາງ.

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 14 ພະຈິກ 2016 ເວລາ 14 ໂມງ 00 ນາທີ, ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນ ແຂວງຫຼວງພະບາງ ເພື່ອພິຈາລະນາຄະດີແພ່ງ ເລກທີ 17/ຂຕ.ພ, ລົງວັນທີ 11 ທັນວາ 2015.

## ລະຫວ່າງ

ທ້າວ ເພັດຈຳພອນ ກຸນດາລາ ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ເຮືອນເລກທີ 22, ບ້ານຊຽງທອງ, ເມືອງຫຼວງພະບາງ ແຂວງຫຼວງພະບາງ..............................ໂຈດ.

ທ້າວ ບຸນທະວີ ຄຳລະຍົກ (ທະນາຍຄວາມ ຜູ້ຕາງໜ້າໂຈດ).

ນາງ ບຸນທັນ ອາຍຸ 58 ປີ, ສັນຊາດລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ເຮືອນເລກທີ 90, ບ້ານສັງຄະໂລກ, ເມືອງຫຼວງພະບາງ ແຂວງຫຼວງພະບາງ..................................................ຈຳເລີຍ.

ກ່ຽວເລື່ອງ: ທວງເອົາເງິນຄືນ

## ສານ

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ໂດຍອີງຕາມໜ້າທີ່ ແລະ ສິດອຳນາດຂອງສານຕາມກົດໝາຍວ່າດ້ວຍ ສານປະຊາຊົນແຫ່ງ ສ ປ ປ ລາວ ສະບັບປັບປຸງປີ 2009.

ໄດ້ແຈ້ງ ຄະດີທີ່ຈະນຳອອກມາພິຈາລະນາໃນທີ່ປະຊຸມສານໃຫ້ຜູ້ເຂົ້າຮ່ວມຊາບແລ້ວ.

ໄດ້ແຈ້ງຊື່ ແລະ ນາມສະກຸນຂອງຄະນະສານ, ຈ່າສານ, ຜູ້ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນແຂວງຫຼວງພະບາງ ໃຫ້ໂຈດ, ຈຳເລີຍ ຊາບແລ້ວ.

ໄດ້ແຈ້ງສິດໃນການຄ້ານຕົວຄະນະສານ ຫຼື ບຸກຄົນໃດໜຶ່ງໃນຄະນະສານ, ຈ່າສານ, ຜູ້ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນ ແຂວງຫຼວງພະບາງ ໃຫ້ໂຈດ, ຈຳເລີຍ ຊາບແລ້ວ.

ໄດ້ແຈ້ງສິດໃນການຕໍ່ສູ້ຄະດີ ໃຫ້ໂຈດ, ຈຳເລີຍ ຊາບແລ້ວ.

ໄດ້ຟັງຄຳໃຫ້ການຂອງໂຈດ, ຈຳເລີຍ ໃນທີ່ປະຊຸມສານແລ້ວ.

ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນແຂວງຫຼວງພະບາງແລ້ວ.

## ເນື້ອຄະດີ

ເຫັນຕາມ ເນື້ອໃນຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໂດຍອ້າງເຫດຜົນວ່າ: ໃນເບື້ອງຕົ້ນຕົນ ແລະ ທ້າວ ແສງວົງຈິດ ຢ່າງວິໄລ ໄດ້ມາຊື້ທີ່ດິນນຳນາງ ບຸນທັນ (ຈຳເລີຍ) ຈຳນວນສອງຕອນຄື: ທີ່ດິນຕອນທີໜຶ່ງມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ທີ່ດິນຕອນທີ່ສອງ ມີເນື້ອທີ່ 1 ເຮັກຕາ 5868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ທີ່ດິນດັ່ງກ່າວຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງໃນມູນຄ່າ 9.600.000 ບາດ ຕາມສັນຍາການຊື້ຂາຍດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ພາຍຫຼັງທີ່ພວກຕົນໄດ້ຈ່າຍເງິນຄ່າທີ່ດິນໃຫ້ນາງ ບຸນທັນ (ຈຳເລີຍ) ໝົດແລ້ວ ແລະ ນາງ ບຸນທັນ (ຈຳເລີຍ) ກໍໄດ້ໂອນໃບຕາດິນອອກເປັນຊື່ທ້າວ ເພັດຈຳພອນ ຊຸນດາລາ + ທ້າວ ແສງວົງຈິດ ຢ່າງວິໄລ ຈາກນັ້ນພວກຕົນຈຶ່ງໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກທີ່ດິນຂອບເຂດແດນຂອງດິນຄືນໃໝ່ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີ່ສອງ ຕາມໃບຕາດິນເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5868 ຕາແມັດ ຕາມໃບຢັ້ງຢືນ ສະບັບເລກທີ 246/ຫຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຫຼວງພະບາງ ຫຼັງຈາກນັ້ນພວກຕົນກໍໄດ້ເຂົ້າໄປຫາ ນາງ ບຸນທັນ (ຈຳເລີຍ) ເພື່ອແຈ້ງໃຫ້ຜູ້ກ່ຽວຮັບຮູ້ວ່າ ເນື້ອທີ່ດິນຕົວຈິງຂອງທີ່ດິນຕອນທີ່ສອງ ແລະ ສະເໜີໃຫ້ ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນໃນເນື້ອທີ່ 1 ເຮັກຕາ ທີ່ຂາດຫາຍໄປນັ້ນຄິດໄລ່ເປັນເງິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ພວກຕົນ ແຕ່ນາງ ບຸນທັນ (ຈຳເລີຍ) ປະຕິເສດບໍ່ຍອມສົ່ງເງິນຄືນໃຫ້ແກ່ພວກຕົນ ເມື່ອເຫດການເປັນແນວນັ້ນ ພວກຕົນຈຶ່ງໄດ້ຂຽນຄຳຮ້ອງຟ້ອງຂຶ້ນມາຍັງສານປະຊາຊົນ ແຂວງຫຼວງພະບາງ ເພື່ອທວງໃຫ້ ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ພວກຕົນ.

ເຫັນຕາມເນື້ອໃນໃບຄຳແກ້ຟ້ອງ ສະບັບລົງວັນທີ 10 ທັນວາ 2015 ຂອງນາງ ບຸນທັນ (ຈຳເລີຍ) ໄດ້ອ້າງເຫດຜົນວ່າ: ຕົນເອງແມ່ນຮັບຮູ້ວ່າໄດ້ຂາຍທີ່ດິນຈຳນວນສອງຕອນ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແທ້, ສ່ວນການທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງພະບາງ ເພື່ອທວງໃຫ້ຕົນສົ່ງເງິນຄ່າດິນຄືນ ຈຳນວນ 5.952.055 ບາດ ຊຶ່ງໄດ້ອ້າງວ່າດິນຕອນ

ທີ່ສອງ ຕາມໃບຕາດິນ ເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5868 ຕາແມັດ ຂາດຫາຍໄປ 1 ເຮັກຕາ ນັ້ນ ຕົນແມ່ນບໍ່ຮັບຮູ້ເພາະວ່າ ໃບຕາດິນທັງສອງສະບັບນັ້ນ ເປັນໃບຕາດິນແຂບຄຳ ຊຶ່ງແມ່ນອົງການລັດກໍຄືຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ເປັນຜູ້ອອກໃຫ້, ກ່ອນຈະມີການຊື້ຂາຍຜູ້ຊື້ກໍ ໄດ້ໄປກວດກາ ຂອບເຂດຂອງທີ່ດິນຕົວຈິງແລ້ວ ແລະ ຕິດກັບທີ່ດິນຂອງໃຜແດ່ ທ້າວ ເພັດຈຳພອນ ຊຸນດາ ລາ (ໂຈດ) ກໍຮັບຮູ້ ແລະ ເຫັນທີ່ດິນຕົວຈິງແລ້ວ ເພາະວ່າການຂາຍທີ່ດິນນັ້ນແມ່ນຂາຍຍົກ (ຂາຍທັງສອງ ຕອນພ້ອມກັນ) ໂດຍບໍ່ໄດ້ຂາຍເປັນຕາແມັດ ຖ້າວ່າເນື້ອທີ່ດິນຫາກບໍ່ຄົບຕາມທີ່ທ້າວ ເພັດຈຳພອນ ຊຸນດາ ລາ (ໂຈດ) ກ່າວອ້າງມານັ້ນ ຕົນກໍຈະຂາຍທີ່ດິນທັງສອງຕອນນັ້ນ ໃນລາຄາ 9.600.000 ບາດ ຄືເກົ່າ ດັ່ງນັ້ນ ຕົນຈະບໍ່ຂໍສົ່ງເງິນຄືນໃຫ້ຜູ້ກ່ຽວເດັດຂາດ, ການທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຮ້ອງຟ້ອງທວງ ໃຫ້ຕົນສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5.952.055 ບາດ ນັ້ນ ເປັນການຄິດໄລ່ເອົາເອງ ໂດຍຄິດໄລ່ເປັນຕາ ແມັດ ຕົນແມ່ນບໍ່ຮັບຮູ້ ສະນັ້ນ ຕົນຈຶ່ງໄດ້ສະເໜີໃຫ້ສານປະຊາຊົນແຂວງຫຼວງພະບາງ ພິຈາລະນາຕັດສິນ ໃຫ້ຄວາມເປັນທຳແກ່ຕົນດ້ວຍ ເນື່ອງຈາກວ່າ: ການຊື້ຂາຍ ລະຫວ່າງຕົນກັບ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈຂອງທັງສອງຝ່າຍ ໂດຍຜ່ານອຳນາດການປົກຄອງທຸກຂັ້ນ ແລະ ຖືກຕ້ອງຕາມຫຼັກການຂອງກົດໝາຍທຸກຢ່າງ ໂດຍຜ່ານທີ່ດິນ ແລະ ທະບຽນສານ, ຕົນຈະບໍ່ຍອມສົ່ງເງິນຄືນ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເດັດຂາດ.

## ວິນິດໄສ

ຜ່ານການຄົ້ນຄວ້າບັນດາຂໍ້ມູນເອກະສານຢູ່ໃນສຳນວນຄະດີ ແລະ ຜົນຂອງການໄຕ່ສວນໃນທີ່ປະ ຊຸມສານແລ້ວ.

ເຫັນວ່າ ໃນເບື້ອງຕົ້ນທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ທ້າວ ອ້ວນ ສຸກຂິທີ ແລະ ທ້າວ ແສງ ວິງຈິດ ຢ່າງວິໄລ ໄດ້ຊື້ທີ່ດິນ ນາງນາງ ບຸນທັນ (ຈຳເລີຍ) ແລະ ທ້າວ ສຸກສະຫວັນ ຈຳນວນສອງຕອນ ທີ່ດິນດັ່ງ ກ່າວຕັ້ງຢູ່ບ້ານສັງຄະໂລກ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ ຊຶ່ງໄດ້ຕົກລົງຊື້ຂາຍນຳກັນໃນມູນຄ່າ 9.600.000 ບາດ ຕາມສັນຍາຊື້ຂາຍສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ພາຍຫຼັງທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ)ໄດ້ຈ່າຍເງິນຄ່າທີ່ດິນໃຫ້ນາງ ບຸນທັນ (ຈຳເລີຍ) ໝົດແລ້ວ ແລະ ນາງ ບຸນທັນ (ຈຳເລີຍ) ກໍໄດ້ໂອນໃບຕາດິນອອກເປັນຊື່ທ້າວ ເພັດຈຳພອນ ຊຸນດາລາ + ທ້າວ ແສງວິງຈິດ ຢ່າງວິໄລ ຈາກ ນັ້ນທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຈຶ່ງໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກທີ່ດິນຂອບເຂດ ແດນຂອງດິນຄືນໃໝ່ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີ່ສອງ ຕາມໃບຕາດິນ ເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5868 ຕາແມັດ ຕາມໃບຢັ້ງຢືນ ສະບັບເລກທີ 246/ຫຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຫຼວງພະບາງ ແລະ ທ້າວເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ທວງໃຫ້ ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນບໍ່ພໍໃນເນື້ອທີ່ 1 ເຮັກຕາ ຄິດໄລ່ເປັນເງິນ ຈຳນວນ 5.952.055 ບາດ ຄືນໃຫ້ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແຕ່ນາງ

ບຸນທັນ (ຈຳເລີຍ) ປະຕິເສດບໍ່ຍອມສົ່ງເງິນຄືນ ດັ່ງນັ້ນ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຈຶ່ງໄດ້ຮ້ອງຟ້ອງຕໍ່ສານເພື່ອທວງເອົາເງິນຈຳນວນດັ່ງກ່າວຈາກນາງ ບຸນທັນ (ຈຳເລີຍ).

ເຫັນວ່າ ການທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຮ້ອງຟ້ອງເພື່ອທວງເອົາເງິນຄ່າທີ່ດິນ 1 ເຮັກຕາ ຕົກເປັນເງິນຈຳນວນ 5.952.055 ບາດ ຈາກນາງ ບຸນທັນ (ຈຳເລີຍ) ນັ້ນ ຊຶ່ງເມື່ອສານໄດ້ພິຈາລະນາຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍແລ້ວ ເຫັນວ່າການຮ້ອງຟ້ອງຂອງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເພື່ອທວງເອົາເງິນຄ່າທີ່ດິນ 1 ເຮັກຕາ ຄິດໄລ່ຕົກເປັນເງິນ ຈຳນວນ 5.952.055 ບາດ ນັ້ນ ແມ່ນມີເຫດຜົນບາງສ່ວນເນື່ອງຈາກວ່າ: ການອອກໃບຕາດິນຂອງອົງການຄຸ້ມຄອງທີ່ດິນ ທີ່ໄດ້ອອກໃຫ້ແກ່ນາງ ບຸນທັນ (ຈຳເລີຍ) ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ທາງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ກໍໄດ້ຢັ້ງຢືນວ່າແມ່ນຜິດພາດທາງດ້ານການພິມ ຊຶ່ງເນື້ອທີ່ດິນຕົວຈິງມີພຽງແຕ່ 5868 ຕາແມັດໂດຍອີງໃສ່ໃບຢັ້ງຢືນ ສະບັບເລກທີ 205/ພຊສ, ລົງວັນທີ 2 ກຸມພາ 2016 ຂອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ແລະ ອີງໃສ່ຂໍ້ມູນກ່ຽວກັບທີ່ດິນຕອນດັ່ງກ່າວໃນເບື້ອງຕົ້ນ ກ່ອນຈະອອກໃບຕາດິນໃຫ້ແກ່ ນາງ ບຸນທັນ (ຈຳເລີຍ) ທາງອົງການຄຸ້ມຄອງທີ່ດິນແຂວງຫຼວງພະບາງ ແມ່ນໄດ້ມີໂຄງການອອກໃບຕາດິນ ແລະ ໄດ້ລົງກວດກາວັດແທກທີ່ດິນຕອນດັ່ງກ່າວແລ້ວ ໃນຄັ້ງວັນທີ 13 ທັນວາ 2002 ກ່ອນຈະອອກ ແຜນທີ່ດິນສະເພາະຕອນໃຫ້ແກ່ນາງ ບຸນທັນ (ຈຳເລີຍ) ແມ່ນມີເນື້ອທີ່ດິນ 5868 ຕາແມັດ ດັ່ງນັ້ນ ອີງໃສ່ມາດຕາ 40 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ໄດ້ກຳນົດໄວ້ວ່າ: ຄຸນນະພາບຂອງຊັບສິ່ງຂອງທີ່ຂາຍ ຕ້ອງໃຫ້ຖືກຕ້ອງຕາມເນື້ອໃນຂອງສັນຍາ. ຖ້າວ່າຊັບສິ່ງຂອງທີ່ຂາຍນັ້ນ ຫາກບໍ່ມີຄຸນນະພາບຕາມທີ່ໄດ້ກຳນົດໄວ້ໃນສັນຍາແລ້ວ ຜູ້ຂາຍຕ້ອງຮັບຜິດຊອບຕໍ່ຊັບສິ່ງຂອງດັ່ງກ່າວ ສະນັ້ນ ສານຈຶ່ງນຳເອົາມູນຄ່າຂອງການຊື້ຂາຍທີ່ດິນ ຈຳນວນ 9.600.000 ບາດ ມາຫານໃຫ້ເນື້ອທີ່ດິນທັງສອງຕອນ 16131 ຕາແມັດ ເທົ່າກັບ 595 ບາດ/ຕໍ່ 1 ຕາແມັດ ແລະ ເນື້ອທີ່ 1 ເຮັກຕາ ເທົ່າກັບ 10.000 ຕາແມັດ x 595 ບາດ/ຕໍ່1 ຕາແມັດ ເທົ່າກັບເງິນຈຳນວນ 5.951.273 ບາດ ດັ່ງນັ້ນ ສານຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າທີ່ດິນ ຈຳນວນ 5.951.273 ບາດ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ).

ເຫັນວ່າ ການທີ່ທ້າວ ບຸນທະວີ ຄໍາລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ) ໄດ້ສະເໜີໃຫ້ສານລົງກວດກາອາຍັດຊັບທີ່ດິນ ແລະ ເຮືອນ, ເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແຂວງຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ (ຈຳເລີຍ) ນັ້ນ ເມື່ອສານໄດ້ຄົ້ນຄວ້າພິຈາລະນາແລ້ວ ມີເຫດຜົນເນື່ອງຈາກວ່າ: ທີ່ດິນພ້ອມດ້ວຍເຮືອນໜຶ່ງຫຼັງ ແລະ ບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແຂວງຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ(ຈຳເລີຍ) ແມ່ນໄດ້ມາພາຍຫຼັງທີ່ນາງ ບຸນທັນ (ຈຳເລີຍ) ໄດ້ຂາຍທີ່ດິນທັງສອງຕອນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ໃນເວລາດຳເນີນຄະດີ ສານກໍໄດ້ລົງກວດກາທີ່ດິນ ແລະ ເຮືອນດັ່ງກ່າວ, ເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ຕາມການຮ້ອງຂໍຂອງທ້າວ ບຸນທະວີ ຄໍາລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ) ຊຶ່ງກໍເຫັນວ່າເປັນກຳມະສິດຂອງ ນາງ ບຸນທັນ (ຈຳເລີຍ) ແທ້ ແລະ ສານກໍໄດ້ອອກຄຳສັ່ງອາຍັດຊັບ

ໄວ້ແລ້ວ ຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕພ, ລົງວັນທີ 10 ສິງຫາ 2016 ແລະ ອີກຢ່າງໜຶ່ງສານກໍໄດ້ຕັດສິນໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າທີ່ດິນ ຈຳນວນ 5.951.273 ບາດ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ດັ່ງນັ້ນ ອີງໃສ່ມາດຕາ 23 ຂໍ້1 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ສະນັ້ນ ເພື່ອຮັບປະກັນການຮ້ອງຟ້ອງ ແລະ ການປະຕິບັດຄຳຕັດສິນໃຫ້ມີຜົນສຳເລັດ ແລະ ມີຄວາມສັກສິດ ເຮັດໃຫ້ໂຈດໄດ້ຮັບເງິນຄືນຄົບຖ້ວນຕາມຈຳນວນນັ້ນ ຖ້າວ່ານາງ ບຸນທັນ (ຈຳເລີຍ) ບໍ່ມີຄວາມສາມາດໃຊ້ແທນເງິນ ຈຳນວນ 5.951.273 ບາດ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນໃຫ້ປະກາດຂາຍທີ່ດິນພ້ອມດ້ວຍເຮືອນ ແລະ ໃຫ້ນຳເອົາເງິນຢູ່ເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ(ຈຳເລີຍ) ຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕພ, ລົງວັນທີ 10 ສິງຫາ 2016 ມາໃຊ້ແທນໃຫ້ແກ່ໂຈດຈົນຄົບຕາມ ຈຳນວນ 5.951.273 ບາດ ແຕ່ຖ້າຫາກວ່າຍັງບໍ່ພໍເປັນເງິນ ຈຳນວນເທົ່າໃດແມ່ນໃຫ້ນາງ ບຸນທັນ (ຈຳເລີຍ) ຊອກມາໃຊ້ແທນໃຫ້ໂຈດຈົນຄົບຕາມຈຳນວນ ແຕ່ຖ້າຫາກວ່າເຫຼືອເປັນເງິນຈຳນວນເທົ່າໃດແມ່ນໃຫ້ສົ່ງຄືນໃຫ້ແກ່ ນາງ ບຸນທັນ (ຈຳເລີຍ).

ເຫັນວ່າ ການທີ່ ທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ) ໄດ້ສະເໜີໃຫ້ສານລົງກວດກາອາຍັດຊັບທີ່ດິນສວນໄມ້ສັກຕັ້ງຢູ່ບ້ານປົ່ງຫວ້ານ ເມືອງຫຼວງພະບາງ ແຂວງຫຼວງພະບາງ ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ລົດກະບະ ຍີ່ຫໍ້ TOYOTA ສີຂາວ ໝາຍເລກທະບຽນ ກກ 3965, ເລກຈັກ 1KD 6990046, ເລກຖັງ MROFZ 29 G 501645590 ອອກຊື່ທ້າວ ສຸກສະຫວັນ ລັກປະສິດ (ລູກຊາຍຈຳເລີຍ) ຊຶ່ງສານພິຈາລະນາແລ້ວ ບໍ່ມີເຫດຜົນ ເນື່ອງຈາກວ່າ: ຜ່ານການລົງກວດກາທີ່ດິນໃນຄັ້ງວັນທີ 26 ກໍລະກົດ 2016 ທາງວິຊາການຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ບໍ່ສາມາດທຳການວັດແທກໄດ້ ສາເຫດຍ້ອນເຈົ້າຂອງສິດນຳໃຊ້ທີ່ດິນ ບໍ່ໄດ້ຖາງແລວເຂດແດນຕອນດິນ ແລະ ນາງ ບຸນທັນ (ຈຳເລີຍ) ແມ່ນບໍ່ໄດ້ໃຫ້ການຮ່ວມມືຕໍ່ຄະນະກຳມະການຂອງສານ ອີກປະການໜຶ່ງ ພວກໂຈດເອງກໍບໍ່ມີເອກະສານກ່ຽວກັບທີ່ດິນຕອນດັ່ງກ່າວມາຢັ້ງຢືນຕໍ່ສານ ດັ່ງນັ້ນ ຈຶ່ງບໍ່ໄດ້ກວດກາອາຍັດຊັບດັ່ງກ່າວໄດ້, ສ່ວນລົດກະບະ ຍີ່ຫໍ້ TOYOTA ສີຂາວ ໝາຍເລກທະບຽນ ກກ 3965, ເລກຈັກ 1KD 6990046, ເລກຖັງ MROFZ 29 G 501645590 ອອກຊື່ທ້າວ ສຸກສະຫວັນ ລັກປະສິດ (ລູກຊາຍຈຳເລີຍ) ລົດຄັນດັ່ງກ່າວທາງສານແມ່ນບໍ່ສາມາດອາຍັດໃຫ້ໄດ້ເພາະບໍ່ແມ່ນກຳມະສິດຂອງນາງ ບຸນທັນ (ຈຳເລີຍ) ແລະ ກໍບໍ່ມີຂໍ້ມູນເອກະສານໃດໆມາຢັ້ງຢືນຕໍ່ສານວ່າລົດຄັນດັ່ງກ່າວໄດ້ມາຈາກການຂາຍທີ່ດິນຂອງນາງ ບຸນທັນ (ຈຳເລີຍ) ແຕ່ຢ່າງໃດ.

ເຫັນວ່າ ການທີ່ນາງ ບຸນທັນ (ຈຳເລີຍ) ອ້າງວ່າ: ການຊື້ຂາຍທີ່ດິນ ລະຫວ່າງນາງ ບຸນທັນ (ຈຳເລີຍ) ແລະ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ນັ້ນ ແມ່ນຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍແລ້ວ ໂດຍຜ່ານອຳນາດການປົກຄອງທຸກຂັ້ນ ຕາມສັນຍາການຊື້ຂາຍດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ແລະ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຈ່າຍເງິນຕາມສັນຍາຊື້ຂາຍໝົດແລ້ວ ແລະ ໃບຕາດິນກໍໄດ້ໂອນເປັນກຳມະສິດຂອງຜູ້ຊື້ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລ້ວ ສ່ວນການທີ່ທ້າວ ເພັດຈຳ

ພອນ ຊຸນດາລາ (ໂຈດ) ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງພະບາງ ເພື່ອໃຫ້ຕົນສົ່ງເງິນຄ່າດິນຄືນ ຈຳນວນ 5.952.055 ບາດ ຊຶ່ງໄດ້ອ້າງວ່າດິນຕອນທີ່ສອງ ຕາມໃບຕາດິນເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5868 ຕາແມັດ ຂາດຫາຍໄປ 1 ເຮັກຕາ ນັ້ນ ຕົນແມ່ນບໍ່ຮັບຮູ້ເນື່ອງຈາກວ່າ: ໃບຕາດິນທັງສອງສະບັບນັ້ນເປັນໃບຕາດິນແຂບຄຳ ຊຶ່ງແມ່ນອົງການລັດກໍຄືຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ເປັນຜູ້ອອກໃຫ້, ເພາະວ່າການຂາຍທີ່ດິນນັ້ນແມ່ນຂາຍຍົກ (ຂາຍທັງສອງຕອນພ້ອມກັນ) ໂດຍບໍ່ໄດ້ຂາຍເປັນຕາແມັດ ຖ້າວ່າເນື້ອທີ່ດິນຫາກບໍ່ຄົບຕາມທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ກ່າວອ້າງມານັ້ນ ຕົນກໍຈະຂາຍທີ່ດິນທັງສອງຕອນນັ້ນ ໃນລາຄາ 9.600.000 ບາດ ຄືເກົ່າ ເມື່ອສານໄດ້ຄົ້ນຄວ້າບັນດາເອກະສານ ແລະ ຂໍ້ມູນຫຼັກຖານຕ່າງໆແລ້ວ ເຫັນວ່າບໍ່ມີເຫດຜົນເນື່ອງຈາກວ່າ: ທີ່ດິນຕອນດັ່ງກ່າວ ນາງ ບຸນທັນ (ຈຳເລີຍ) ແມ່ນຮູ້ດີວ່າທີ່ດິນຂອງຜູ້ກ່ຽວແມ່ນມີເນື້ອທີ່ 5868 ຕາແມັດ ຊຶ່ງສະແດງອອກຢູ່ບ່ອນວ່າ ການເສຍພາສີທີ່ດິນໃຫ້ບ້ານໃນໄລຍະຜ່ານມາ ແມ່ນເສຍພາສີໃນເນື້ອທີ່ດິນ 5868 ຕາແມັດ ເທົ່ານັ້ນ ແລະ ມາຮອດປີ 2010 ຜູ້ກ່ຽວຈຶ່ງໄດ້ມາເສຍພາສີໃຫ້ບ້ານສັງຄະໂລກ ໃນເນື້ອທີ່ດິນ 15,868 ຕາແມັດ ແຕ່ຜູ້ກ່ຽວກໍຍັງເມີນເສີຍບໍ່ໄດ້ສະເໜີຕໍ່ນາຍບ້ານສັງຄະໂລກ ແລະ ພະນັກງານທີ່ມາເກັບພາສີທີ່ດິນກ່ຽວກັບການເພີ່ມຂຶ້ນ ຂອງເນື້ອທີ່ດິນຕອນດັ່ງກ່າວແຕ່ປະການໃດ ສະນັ້ນ ການຊື້ຂາຍທີ່ດິນລະຫວ່າງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ທ້າວ ອ້ວນ ສຸກຊົທ ແລະ ທ້າວ ແສງວົງຈິດ ຢ່າງວິໄລ ກັບນາງ ບຸນທັນ (ຈຳເລີຍ) ແລະ ທ້າວ ສຸກສະຫວັນ ເຫັນວ່າຍັງບໍ່ທັນຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍບາງສ່ວນ ຊຶ່ງສະແດງອອກຢູ່ບ່ອນວ່າສັນຍາສະບັບດັ່ງກ່າວສ້າງຂຶ້ນໂດຍການເຊື່ອງອຳເນື້ອທີ່ດິນ 1 ເຮັກຕາ 5868 ຕາແມັດ ຊຶ່ງເນື້ອທີ່ດິນຕົວຈິງ ມີພຽງເນື້ອທີ 5868 ຕາແມັດເທົ່ານັ້ນ ໂດຍອີງໃສ່ໃບເກັບເງິນຄ່າທຳນຽມນຳໃຊ້ທີ່ດິນ ສະບັບລົງວັນທີ 28 ມັງກອນ 2010 ສະນັ້ນ ອີງໃສ່ມາດຕາ 10 ຂໍ້ 3, ມາດຕາ 19 ຂໍ້ 1, ມາດຕາ 20 ຂໍ້ 3 ແລະ ມາດຕາ 21 ວັກ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ສັນຍາຊື້ຂາຍດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ລະຫວ່າງນາງ ບຸນທັນ (ຈຳເລີຍ), ທ້າວ ສຸກສະຫວັນ ແລະ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ທ້າວ ອ້ວນ ສຸກຊົທ, ທ້າວ ແສງວົງຈິດ ຢ່າງວິໄລ ແມ່ນເປັນໂມຄະບໍ່ເດັດຂາດ ຫຼື ເປັນໂມຄະບາງສ່ວນ ຊຶ່ງເປັນການສ້າງຄວາມເສັຍປະໂຫຍດໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ດັ່ງນັ້ນ ສານຈຶ່ງເຫັນຄວນລົບລ້າງສັນຍາຊື້ຂາຍ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ບາງສ່ວນ ລົບລ້າງໃນສ່ວນທີ່ເປັນໂມຄະກໍຄືເນື້ອທີ່ດິນ 1 ເຮັກຕາ ເທົ່າກັບ 10.000 ຕາແມັດ ຖິ້ມ ພ້ອມທັງລົບລ້າງໃບຕາດິນ ສະບັບເລກທີ 223, ລົງວັນທີ 7 ກຸມພາ 2014 ມີເນື້ອທີ່ 1 ເຮັກຕາ 5868 ຕາແມັດ ອອກຊື່ທ້າວ ເພັດຈຳພອນ ຊຸນດາລາ ແລະ ທ້າວ ແສງວົງຈິດ ຢ່າງວິໄລ ຖິ້ມ ແລ້ວມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ອອກໃບຕາດິນໃໝ່ ໃນເນື້ອທີ່ 5868 ຕາແມັດ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ທ້າວ ແສງວົງຈິດ ຢ່າງວິໄລ.

ເຫັນວ່າຄະດີດັ່ງກ່າວທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຮ້ອງຟ້ອງເພື່ອທວງໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນ 1 ເຮັກຕາ ເທົ່າກັບ 10.000 ຕາແມັດ ຄິດໄລ່ເປັນເງິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເມື່ອສານໄດ້ພິຈາລະນາແລ້ວ ເຫັນວ່າການຮ້ອງຟ້ອງ

ຂອງທ້າວ ເພັດຈຳພອນ ຊຸນດາລາ(ໂຈດ) ມີເຫດຜົນຊຶ່ງສານໄດ້ພິຈາລະນາຕັດສິນໃຫ້ນາງ ບຸນທັນ(ຈຳເລີຍ) ສົ່ງເງິນຈຳນວນ 5.951.273 ບາດ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຈຶ່ງຖືວ່ານາງ ບຸນທັນ (ຈຳເລີຍ) ເປັນຝ່າຍເສຍຄະດີ ສານຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ) ເສຍອາກອນຂອງລັດ ຈຳນວນ 2% ຂອງມູນຄ່າການຮ້ອງຟ້ອງຄື: 5.951.273 ບາດ x 2% ເທົ່າກັບ 119.025 ບາດ, ສ່ວນທີ່ໂຈດຮ້ອງຟ້ອງບໍ່ມີເຫດຜົນ ຂອງເງິນຈຳນວນ 781 ບາດ ສານຈຶ່ງເຫັນຄວນ ໃຫ້ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເສຍອາກອນໃຫ້ແກ່ລັດ 2% ຂອງມູນຄ່າການຮ້ອງຟ້ອງບໍ່ມີເຫດຜົນຄື: 781 ບາດ x 2% ເທົ່າກັບເງິນ ຈຳນວນ 15 ບາດ ຈຶ່ງເປັນການຖືກຕ້ອງ ແລະ ສອດຄ່ອງກັບມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ແລະ ມາດຕາ 160 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ເຫັນວ່າ ໃນເວລາດຳເນີນຄະດີເລື່ອງນີ້ ສານໄດ້ລົງກວດກາທີ່ດິນບ່ອນຂັດແຍ່ງກັນນີ້ ຕາມການຮ້ອງຂໍຂອງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຊຶ່ງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ນຳເງິນມາມອບໃຫ້ສານ ຈຳນວນ 1.200.000 ກີບ ເພື່ອໃຫ້ສານ ແລະ ພາກສ່ວນກ່ຽວຂ້ອງເປັນຄ່າວິຊາການລົງກວດກາທີ່ດິນຂັດແຍ່ງດັ່ງກ່າວ ໃນຄັ້ງວັນທີ 13 ມັງກອນ 2016 ທາງສານແມ່ນໄດ້ໃຊ້ຈ່າຍໃຫ້ວິຊາການໝົດແລ້ວ ຕາມໃບສະຫຼຸບລາຍຈ່າຍວິຊາການ ໃນຄັ້ງວັນທີ 13 ມັງກອນ 2016 ສະນັ້ນ ນາງ ບຸນທັນ (ຈຳເລີຍ) ແມ່ນເປັນຝ່າຍເສຍຄະດີຕ້ອງໄດ້ຮັບຜິດຊອບ ໃຊ້ແທນເງິນຈຳນວນດັ່ງກ່າວຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຈຶ່ງເປັນການຖືກຕ້ອງ ແລະ ສອດຄ່ອງກັບມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ແລະ ມາດຕາ 160 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ເຫັນວ່າ ໃນເວລາດຳເນີນຄະດີຢູ່ສານ ທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ) ໄດ້ນຳເງິນມາວາງໃຫ້ສານ ຈຳນວນ 2.000.000 ກີບ ເພື່ອໃຫ້ສານ ແລະ ພາກສ່ວນກ່ຽວຂ້ອງເປັນຄ່າວິຊາການລົງກວດກາອາຍັດທີ່ດິນ ແລະ ເຮືອນ ໃນຄັ້ງວັນທີ 26 ກໍລະກົດ 2016 ເງິນຈຳນວນດັ່ງກ່າວທາງສານແມ່ນໄດ້ໃຊ້ຈ່າຍໃຫ້ວິຊາການໝົດແລ້ວ ຕາມໃບສະຫຼຸບລາຍຈ່າຍວິຊາການ ໃນຄັ້ງວັນທີ 26 ກໍລະກົດ 2016 ສະນັ້ນ ນາງ ບຸນທັນ (ຈຳເລີຍ) ແມ່ນເປັນຝ່າຍເສຍຄະດີ ຕ້ອງໄດ້ຮັບຜິດຊອບໃຊ້ແທນເງິນຈຳນວນດັ່ງກ່າວ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ(ໂຈດ) ຈຶ່ງເປັນການຖືກຕ້ອງ ແລະ ສອດຄ່ອງກັບມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ແລະ ມາດຕາ 160 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ເຫັນວ່າ ໃນເວລາດຳເນີນຄະດີເລື່ອງນີ້ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ນຳເງິນມາວາງສານ ຈຳນວນ 200.000 ກີບ, ເພື່ອເປັນຄ່າໃຊ້ຈ່າຍໃນການສົ່ງໝາຍຮຽກ, ໝາຍເຊີນ ແລະ ສິ່ງເອກະສານອື່ນໆໝົດແລ້ວ ຕາມບົດສະຫຼຸບລາຍຈ່າຍເງິນວາງສານ ສະບັບເລກທີ 12/ຈສພ, ລົງວັນທີ 10 ພະຈິກ 2016 ສະນັ້ນ ໃນເມື່ອນາງ ບຸນທັນ (ຈຳເລີຍ) ເປັນຝ່າຍທີ່ເສຍຄະດີ ສານຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ)

ທົດແທນເງິນວາງສານ ຈຳນວນ 200.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ຈຶ່ງເປັນການຖືກຕ້ອງ ແລະ ສອດຄ່ອງກັບມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ແລະ ມາດ ຕາ 160 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ເຫັນວ່າ ໃນເວລາດຳເນີນຄະດີຢູ່ສານປະຊາຊົນ ແຂວງຫຼວງພະບາງ ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ໄດ້ນຳເອົາເງິນມາວາງໃຫ້ສານເປັນຄ່າເສື້ອປົກຫຼັງສຳນວນຄະດີ ຈຳນວນ 35.000 ກີບ ເງິນຈຳນວນດັ່ງກ່າວ ທາງສານປະຊາຊົນແຂວງຫຼວງພະບາງ ໄດ້ໃຊ້ຈ່າຍຊື້ເສື້ອປົກຫຼັງສຳນວນຄະດີແພ່ງໝົດແລ້ວ ສະນັ້ນ ນາງ ບຸນທັນ (ຈຳເລີຍ) ແມ່ນເປັນຝ່າຍເສັຍຄະດີ ດັ່ງນັ້ນ ອີງໃສ່ມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006 ສານຈຶ່ງເຫັນຄວນໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບໃຊ້ແທນເງິນຄ່າເສື້ອປົກຫຼັງສຳນວນຄະດີ ຈຳນວນ 35.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ).

ເຫັນຕາມ ມາດຕາ 10 ຂໍ້3, 19 ຂໍ້1, 20 ຂໍ້3, 21ວັກ2, 23ຂໍ້1 ແລະ ມາດຕາ 40 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງ ປີ 2008.

ເຫັນຕາມມາດຕາ 18, 19, 21, 22, 23, 24 ແລະ ມາດຕາ 26 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານສະບັບປັບປຸງປີ 2006.

ເຫັນຕາມ ມາດຕາ160, 202, 205, 206, 207, 213, 217, 218, 219, 222, 223, 225, 226, 230, 231, 237, 238, 240, 241, 242, 243, 244, 245, 246, 247, 249, 250, 252, 257, 260 ແລະ 262 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

## ດ້ວຍເຫດນີ້

ຄະນະສານແພ່ງ ຂອງສານປະຊາຊົນແຂວງຫຼວງພະບາງ ຈຶ່ງໄດ້ຕັດສິນຄະດີນີ້ ຕໍ່ໜ້າປະຊາຊົນເປັນຂັ້ນຕົ້ນໂດຍຊ້ອງໜ້າໂຈດ ແລະ ຈຳເລີຍ.

ບອກວ່າ: ຄຳຮ້ອງຟ້ອງຂອງທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ສະບັບລົງວັນທີ 20 ພະຈິກ 2015 ມີເຫດຜົນບາງສ່ວນ ສານຈຶ່ງນຳມາພິຈາລະນາ.

ຄຳແກ້ຟ້ອງຂອງນາງ ບຸນທັນ (ຈຳເລີຍ) ສະບັບລົງວັນທີ 10 ທັນວາ 2015 ບໍ່ມີເຫດຜົນ ສານຈຶ່ງບໍ່ນຳມາພິຈາລະນາ.

ໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນ ຈຳນວນ 5.951.273 ບາດ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ(ໂຈດ), ຖ້າວ່ານາງ ບຸນທັນ(ຈຳເລີຍ) ບໍ່ມີຄວາມສາມາດໃຊ້ແທນເງິນ ຈຳນວນ 5.951.273 ບາດ ໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ແມ່ນໃຫ້ປະກາດຂາຍທີ່ດິນພ້ອມດ້ວຍເຮືອນ ແລະ ໃຫ້ນຳເອົາເງິນຢູ່ເລກບັນຊີເງິນຝາກ ຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ (ຈຳເລີຍ) ຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕພ, ລົງວັນທີ 10 ສິງຫາ 2016 ມາໃຊ້ແທນໃຫ້ແກ່ໂຈດຈົນຄົບຕາມ ຈຳນວນ 5.951.273 ບາດ ແຕ່ຖ້າຫາກວ່າຍັງບໍ່ພໍເປັນເງິນຈຳ

ນວນເທົ່າໃດແມ່ນໃຫ້ນາງ ບຸນທັນ (ຈຳເລີຍ) ຊອກມາໃຊ້ແທນໃຫ້ໂຈດຄືນຕາມຈຳນວນ ແຕ່ຖ້າຫາກວ່າເຫຼືອເປັນເງິນຈຳນວນເທົ່າໃດ ແມ່ນໃຫ້ສົ່ງຄືນໃຫ້ແກ່ ນາງ ບຸນທັນ (ຈຳເລີຍ).

ໃຫ້ນາງ ບຸນທັນ(ຈຳເລີຍ) ເສຍເງິນຄ່າອາກອນໃຫ້ແກ່ລັດ ຈຳນວນ 119.025 ບາດ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ໃນເວລາປະຕິບັດຄຳຕັດສິນຂອງສານ.

ໃຫ້ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ເສຍເງິນຄ່າອາກອນໃຫ້ແກ່ລັດ ຈຳນວນ 15 ບາດ.

ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວິຊາການລົງກວດກາທີ່ດິນ ຈຳນວນ 1.200.000 ກີບຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ).

ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວິຊາການລົງກວດກາອາຍັດທີ່ດິນ ແລະ ເຮືອນ ຈຳນວນ 2.000.000 ກີບຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ).

ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນວາງສານ ຈຳນວນ 200.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ).

ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າເສື້ອປົກຫຸ້ມສຳນວນຄະດີ ຈຳນວນ 35.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ).

ໄດ້ແຈ້ງໃຫ້ໂຈດ, ຈຳເລີຍຊາບແລ້ວ ຖ້າຄູ່ຄວາມຝ່າຍໃດຝ່າຍໜຶ່ງບໍ່ພໍໃຈຕໍ່ຄຳຕັດສິນສະບັບນີ້ ມີສິດຂໍອຸທອນ ແລະ ພະນັກງານໄອຍະການ ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນ ແຂວງຫຼວງພະບາງ ມີສິດສະເໜີຄັດຄ້ານໄດ້ພາຍໃນກຳນົດ 20 ວັນ ນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ.

ປະທານຄະນະສານ

ແສງດາວເພັດ ເອດນະບີ

ຈ່າສານ

ສອນເພັດ ພັນທະສິນ

................ງ້......

ສຳເນົາຖືກຕ້ອງຕາມສະບັບເດີມ

ຫລວງພະບາງ, ວັນທີ 17 ພະຈິກ 2016

ຈ່າສານແພງ

ສານປະຊາຊົນແຂວງຫຼວງພະບາງ

ຈ່າສານ

**ສອນເພັດ ພັນທະສິນ**